ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມຈັດຕັ້ງ ແລະ ພະນັກງານ

ເລກທີ 0671 /ກຈພ

ນະຄອນຫຼວງວຽງຈັນ, ວັນທີ 29.03.2023.

# ແຈ້ງການ

ເຖິງ : - ຫ້ອງການກະຊວງ, ບັນດາກົມ, ສະຖາບັນ ແລະ ສູນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້;

- ບັນດາວິທະຍາໄລກະສິກຳ ແລະ ປ່າໄມ້, ໂຮງຮຽນຊົນລະປະທານຊັ້ນສູງທ່າງ່ອນ ທີ່ຂຶ້ນກັບ ກະຊວງກະສິກຳ ແລະ ປ່າໄມ້;
- ບັນດາພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ.

ເລື່ອງ: ສະໝັກທຶນການສຶກສາລະດັບປະລິນຍາໂທ ແລະ ປະລິນຍາເອກ ສຳລັບປີ **2023** ພາຍໃຕ້ທຶນຂອງ ອົງການຮ່ວມມືສາກົນເກົາຫຼີ **(KOICA Scholarship Program 2023)**, ທີ່ ສ. ເກົາຫຼີ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 1617/ກປ, ລົງວັນທີ 29 ທັນວາ 2021;
- ອີງຕາມ ແຈ້ງການຂອງ ຫ້ອງການ, ກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 0576/ກຜທ. ກຮມ-ອປອ.03, ລົງວັນທີ 27 ມີນາ 2023;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງ ພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ.

ກົມຈັດຕັ້ງ ແລະ ພະນັກງານ ຂໍຖືເປັນກຽດແຈ້ງມາຍັງທ່ານ ກ່ຽວກັບທຶນການສຶກສາລະດັບປະລິນຍາໂທ ແລະ ປະລິນຍາເອກ ສຳລັບ ປີ 2023 ພາຍໃຕ້ທຶນຂອງອົງການຮ່ວມມືສາກົນເກົາຫຼີ (KOICA Scholarship Program 2023), ທີ່ ສ.ເກົາຫຼີ, ເຊິ່ງມີຈຳນວນ 10 ຫົວຂໍ້ ສຳລັບປະລິນຍາໂທ ແລະ 02 ຫົວຂໍ້ ສຳລັບປະລິນຍາເອກ ທີ່ຜູ້ສົນໃຈສາມາດເລືອກສະໝັກໄດ້ປະກອບມີ: ຫົວຂໍ້ທີ່ກ່ຽວຂ້ອງກັບຂະແໜງກະສິກຳ ແລະ ປ່າໄມ້ ແລະ ຫົວຂໍ້ທີ່ກ່ຽວຂ້ອງກັບວິຊາສະເພາະຂອງຕົນ, ດັ່ງມີລາຍລະອຽດລຸ່ມນີ້:

| ລ/ດ | ຫົວຂໍ້ | ມະຫາວິທະຍາໄລ | ລະດັບ |
|---|---|---|---|
| 1 | Trade and Industrial Policy | KDI School of Public Policy and Management | ປະລິນຍາໂທ |
| 2 | Urban Development | University of Seoul | |
| 3 | Agriculture Economics | Kangwon National University | |
| 4 | Agriculture Engineering | Kyungpook National University | |
| 5 | Sustainable Regional Development | KDI School of Public Policy and Management | |
| 6 | Policy Competency Based on ICT Convergence | Handong Global University | |
| 7 | Water Resources Management | Yeungnam University | |
| 8 | Energy Policy | Soul National University | |


ກົມຈັດຕັ້ງ ແລະ ພະນັກງານ, ຕູ້ປນ 811, ນະຄອນຫຼວງວຽງຈັນ, ສປປ ລາວ

ໂທລະສັບ/ແຟັກ: 021 412347, 415368, 452455, E-mail: doapmaf@gmail.com

| | | | |
|---|---|---|---|
| 9 | Global Health Security | Yonsei University | ປະລິນຍາໂທ |
| 10 | Agricultural Production | Kyungpook National University | |
| 11 | Agricultural Production | Kyungpook National University | ປະລິນຍາເອກ |
| 12 | Global Health Security | Yonsei University | |

ເງື່ອນໄຂ ແລະ ວິທີການສະໝັກ:

❖ ລະດັບປະລິນຍາໂທ

- ຜູ້ທີ່ຈະສະໝັກຕ້ອງເປັນພົນລະເມືອງສັນຊາດລາວ ອາຍຸບໍ່ເກີນ 40 ປີ;
- ຜູ້ສະໝັກໃນລະດັບປະລິນຍາໂທ ຕ້ອງມີປະສົບການໃນການເຮັດວຽກທີ່ກ່ຽວຂ້ອງ ຢ່າງໜ້ອຍ 02 ປີ.
- ຜູ້ທີ່ຈະສະໝັກຕ້ອງຈົບການສຶກສາໃນລະດັບ ປະລິນຍາຕີ ຂຶ້ນໄປ ທັງພາຍໃນ ແລະ ຕ່າງປະເທດ;
- ຜູ້ສະໝັກຕ້ອງມີຄວາມຮູ້ດ້ານພາສາອັງກິດໃນລະດັບດີ, ຖ້າມີຄະແນນ IELTS ຈະເປັນການດີ;
- ຜູ້ສະໝັກທີ່ໄດ້ຈົບການສຶກສາລະດັບປະລິນຍາໂທຈາກຕ່າງປະເທດ ແມ່ນບໍ່ສາມາດສະໝັກໄດ້;

❖ ລະດັບປະລິນຍາເອກ

- ຜູ້ທີ່ຈະສະໝັກຕ້ອງຈົບການສຶກສາໃນລະດັບປະລິນຍາໂທ ຂອງອົງການ KOICA ເທົ່ານັ້ນ;
- ຜູ້ທີ່ຈະສະໝັກຕ້ອງເປັນພົນລະເມືອງສັນຊາດລາວ ອາຍຸບໍ່ເກີນ 40 ປີ;
- ຜູ້ສະໝັກຕ້ອງມີຄວາມຮູ້ດ້ານພາສາອັງກິດໃນລະດັບດີ, ຖ້າມີຄະແນນ IELTS ຈະເປັນການດີ.

ສຳລັບແບບຟອມສະໝັກ ແລະ ລາຍລະອຽດຕ່າງໆຂອງທຶນສາມາດດາວໂຫຼດໄດ້ທີ່ ເວັບໄຊ https://koica.go.kr/sites/ciat/index.do ຫຼື ຕາມ QR Code ດ້ານລຸ່ມ, ສ່ວນລາຍລະອຽດເພີ່ມເຕີມໃຫ້ພົວພັນພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ, ກົມຈັດຕັ້ງ ແລະ ພະນັກງານ: (ທ.ສົມເພັດອຸດອນ ດວງມາລາ) ໂທ: 021 415368, 020 52879569.

ພາຍຫຼັງທີ່ຄັດເລືອກເອົາພະນັກງານຜູ້ທີ່ມີເງື່ອນໄຂເໝາະສົມແລ້ວແມ່ນໃຫ້ຜູ້ສະໝັກສົ່ງ ແບບຟອມສະໝັກ ແລະ ເອກະສານຕ່າງໆທີ່ກ່ຽວຂ້ອງ ຫາມະຫາວິທະຍາໄລທີ່ຕົນຕ້ອງການສະໝັກໂດຍທາງອີເມວ ຂອງມະຫາວິທະຍາໄລ ແລະ ສົ່ງລາຍຊື່ ພ້ອມແບບຟອມສະໝັກຕາມເງື່ອນໄຂຂອງອົງການຮ່ວມມືສາກົນເກົາຫຼີ (KOICA) ເຖິງ ກົມຈັດຕັ້ງ ແລະ ພະນັກງານ ເພື່ອສັງລວມສົ່ງໃຫ້ ກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ ກ່ອນວັນທີ **05 ເມສາ 2023** .

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພິຈາລະນາຕາມທາງຄວນດ້ວຍ.

ສຳລັບແບບຟອມສະໝັກ

**ຫົວໜ້າກົມ**

ກະຊວງກະສິກຳ ແລະ ປ່າໄມ້ ກົມຈັດຕັ້ງແລະພະນັກງານ

ບຸນທະວີ ໄຊຍະເພັດ

ກົມຈັດຕັ້ງ ແລະ ພະນັກງານ, ຕູ້ປນ 811, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ/ແຟັກ: 021 412347, 415368, 452455, E-mail: doapmaf@gmail.com